**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 35 /ຄອສພ
ນະຄອນຫຼວງວຽງຈັນ, ວັນທີ 29/ 09/ 2021

# ຄຳແນະນຳ
## ເພີ່ມທະວີວຽກງານໂຄສະນາອົບຮົມການເມືອງ-ແນວຄິດ ກ່ຽວກັບຈັດຕັ້ງປະຕິບັດມາດຕະການການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂພະຍາດໂຄວິດ-19

**ເຖິງ:** - ຄະນະໂຄສະນາອົບຮົມນະຄອນຫຼວງ, ບັນດາແຂວງ ໃນຂອບເຂດທົ່ວປະເທດ.
- ກົມໂຄສະນາອົບຮົມ ຂອງບັນດາກະຊວງ-ອົງການຂັ້ນສູນກາງ.

**ເລື່ອງ:** ເພີ່ມທະວີວຽກງານໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ກ່ຽວກັບການຈັດຕັ້ງປະຕິບັດມາດຕະການປ້ອງກັນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19.

- ອີງໃສ່ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19.
- ອີງໃສ່ ຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 87/ຄລສພ, ລົງວັນທີ 25 ເມສາ 2021 ວ່າດ້ວຍຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນ ໃນການສືບຕໍ່ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂພະຍາດໂຄວິດ-19.
- ອີງໃສ່ ແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 44/ ຫສພ, ລົງວັນທີ 31 ສິງຫາ 2021 ວ່າດ້ວຍທິດຊີ້ນຳຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ກ່ຽວກັບສະພາບການ, ທິດທາງ ແລະ ມາດຕະການແກ້ໄຂຜົນກະທົບຈາກການລະບາດ ຂອງພະຍາດໂຄວິດ-19.

ຕໍ່ໜ້າສະພາບການລະບາດຂອງພະຍາດໂຄວິດ-19 ປັດຈຸບັນຢູ່ໃນໂລກ ແລະ ພາກພື້ນ ເຫັນວ່າຫຼາຍປະເທດຍັງສືບຕໍ່ມີການລະບາດ ຂອງພະຍາດໂຄວິດ-19 ຈຳນວນຜູ້ຕິດເຊື້ອພະຍາດໂຄວິດ-19 ແລະ ຕົວເລກຜູ້ເສຍຊີວິດມີຈຳນວນເພີ່ມຂຶ້ນຫຼາຍໃນແຕ່ລະວັນ, ຫຼາຍກວ່າໝູ່ແມ່ນ ສ.ອາເມລິກາ, ອິນເດຍ ແລະ ບຣາຊິວ...; ສ່ວນໃນບັນດາປະເທດສະມາຊິກອາຊຽນຈຳນວນຜູ້ຕິດເຊື້ອໂຄວິດ-19 ຫຼາຍກວ່າໝູ່ ແມ່ນປະເທດອິນໂດເນເຊຍ ເຊິ່ງຈັດເປັນອັນດັບ 18 ຂອງໂລກ, ຖັດມາແມ່ນປະເທດຟີລິບປິນ ແລະມາເລເຊຍ. ສຳລັບບັນດາປະເທດທີ່ມີຊາຍ

ແດນຕິດກັບ ສປປ ລາວ ກໍຍັງມີຜູ້ຕິດເຊື້ອພະຍາດໂຄວິດ-19 ມີຈຳນວນເພີ່ມຂຶ້ນ ແລະ ຈຳນວນຜູ້ທີ່ເສຍຊີວິດກໍ່ເພີ່ມຂຶ້ນໃນແຕ່ລະວັນ ເປັນຕົ້ນ ແມ່ນ ປະເທດໄທ, ຫວຽດນາມ ກຳປູເຈຍ ແລະ ມຽນມາ.

- ສຳລັບ ສປປ ລາວ ມາເຖິງປັດຈຸບັນ ການລະບາດຂອງພະຍາດໂຄວິດ-19 ຢູ່ໃນໄລຍະທີ 3 ເຊິ່ງນັບແຕ່ກາງເດືອນກັນຍາ 2021 ເປັນຕົ້ນມາ ມີຈຳນວນຜູ້ຕິດເຊື້ອພະຍາດໂຄວິດ-19 ເພີ່ມຂຶ້ນແຕ່ລະມື້ ແລະມີການລະບາດເປັນວົງກວ້າງເຂົ້າໄປໃນຊຸມຊົນໃນຫຼາຍບ້ານ ແລະ ໃນໂຮງຈັກໂຮງງານຈຳນວນໜຶ່ງ ເຊິ່ງສາເຫດແມ່ນເລີ່ມຈາກການຕິດເຊື້ອ ຂອງພະນັກງານທີ່ເຮັດໜ້າທີ່ປະຈັນບານ ເປັນຕົ້ນ ພະຍາບານ, ທະຫານ, ຕຳຫຼວດ ແລະການຮັບເອົາແຮງງານລາວທີ່ກັບຄືນຈາກປະເທດເພື່ອນບ້ານ(ໄທ). ສະພາບການລະບາດທີ່ຮຸນແຮງ ໄດ້ເລີ່ມແຕ່ວັນທີ 18-28 ກັນຍາ 2021 (ພາຍໃນ 10 ວັນ) ມີຈຳນວນຜູ້ທີ່ຕິດເຊື້ອພະຍາດໂຄວິດ-19 ໄດ້ເພີ່ມຂຶ້ນຢ່າງໄວວາໃນຂອບເຂດທົ່ວປະເທດ ບາງມື້ມີຜູ້ຕິດເຊື້ອສູງເຖິງ 600 ກວ່າກໍລະນີ, ຕົວເລກສະສົມແມ່ນ 22.941 ຄົນ; ປິ່ນປົວຫາຍດີຈຳນວນ 17.00 ກວ່າຄົນ, ກຳລັງປິ່ນປົວຈຳນວນ 4.000 ກວ່າຄົນ, ເສຍຊີວິດ 17 ຄົນ; ປັດຈຸບັນນີ້ ເຊື້ອພະຍາດໂຄວິດ-19 ໄດ້ກາຍພັນຈາກເຊື້ອເດວຕາມາເປັນເດວຕາພລັສ ເຊິ່ງເຊື້ອດັ່ງກ່າວນີ້ ມີການແຜ່ເຊື້ອໄວທີ່ສຸດ ແລະ ເປັນໄພອັນຕະລາຍຮ້າຍແຮງກວ່າສາຍພັນເກົ່າ; ປັດຈຸບັນເຊື້ອພະຍາດໂຄວິດ-19 ເດວຕາພລັສ ໄດ້ແຜ່ລະບາດຢູ່ໃນບາງແຂວງຂອງປະເທດເຮົາ ເປັນຕົ້ນ ນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ; ຈາກການສະຫຼຸບລາຍງານ ຂອງຄະນະສະເພາະກິດຂັ້ນສູນກາງ ໃນວັນທີ 28 ກັນຍາ 2021, **ທົ່ວປະເທດ ມີບ້ານແດງ 264 ບ້ານ, 40 ເມືອງ, 11 ແຂວງ, ແລະຍັງຈະມີທ່າອ່ຽງສືບຕໍ່ເພີ່ມຂຶ້ນຕື່ມໃນແຕ່ລະວັນ.**

ຕໍ່ກັບສະພາບການລະບາດຂອງພະຍາດໂຄວິດ-19 ທີ່ພວມແຜ່ລະບາດເຊື້ອພະຍາດເຂົ້າໃນຊຸມຊົນເປັນວົງກວ້າງ ແລະ ມີຜູ້ຕິດເຊື້ອ ເພີ່ມຂຶ້ນໃນແຕ່ລະວັນນັ້ນ; ເພື່ອສືບຕໍ່ການເພີ່ມທະວີວຽກງານໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ກ່ຽວກັບການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະແກ້ໄຂພະຍາດໂຄວິດ-19 ໃນສະເພາະໜ້າ ແລະ ຍາວນານ.

ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງໄດ້ອອກຄຳແນະນຳ **ເພີ່ມທະວີວຽກງານການໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ກ່ຽວກັບການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂພະຍາດໂຄວິດ-19** ດັ່ງນີ້:

1. ຄະນະໂຄສະນາອົບຮົມແຕ່ລະຂັ້ນ ຕ້ອງຖືເອົາທິດນຳຂອງກົມການເມືອງສູນກາງພັກທີ່ວ່າ: ***"ຖືເອົາການຕ້ານສະກັ້ນກັດ, ຄວບຄຸມ ແລະ ປ້ອງກັນພະຍາດໂຄວິດ-19 ເປັນໜ້າທີ່ຍຸດທະສາດສຳຄັນແຖວໜ້າ ແລະ ຮີບດ່ວນໃນການນຳພາ-ຊີ້ນຳ ແລະ ບັນຊາຕົວຈິງຄືຢູ່ໃນສະພາວະສົງຄາມ; ຖືເປັນປັດໄຈສຳຄັນຕັດສິນກວ່າໝູ່ໃນການຈັດຕັ້ງປະຕິບັດສະກັດກັ້ນ, ຄວບຄຸມການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ເດັດຂາດບໍ່ໃຫ້ປະເທດເຮົາມີການລະບາດເຊື້ອພະຍາດໃນຄັ້ງໃໝ່ ແລະ ການລະບາດຮອບໃໝ່ ເຊິ່ງຈະທະວີຄູນຂຶ້ນກວ່າເກົ່າ; ຕ້ອງຖືເປັນໜ້າທີ່ຍຸດທະສາດຂອງທົ່ວພັກ, ທົ່ວລັດ, ທົ່ວປວງຊົນລາວທັງຊາດ", ເສີມຂະຫຍາຍບົດບາດສາຍພົວພັນທີ່ວ່າ: "ພັກນຳພາ, ລັດຄຸ້ມຄອງ, ປະຊາຊົນເປັນເຈົ້າ"*** ເປັນໜ້າທີ່ວຽກງານໃນເຄື່ອນໄຫວໂຄສະນາສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າ.

2. ຕ້ອງຖືເປັນແນວທາງຍຸດທະສາດໃນການຕ້ານ, ສະກັດກັ້ນ, ປ້ອງກັນ ແລະ ການແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19, ໃຫ້ຖືເປັນສະໜາມຮົບແຖວໜ້າ, ເປັນສະໜາມຮົບປະຈັນບານໃນວຽກງານໂຄສະນາເຜີຍແຜ່, ສຶກສາອົບຮົມ, ຊີ້ແຈງອະທິບາຍດ້ວຍເຫດ ແລະ ຜົນ; ສືບຕໍ່ເພີ່ມທະວີວຽກງານໂຄສະນາ

ສຶກສາອົບຮົມຢ່າງກວ້າງຂວາງ ແລະ ເລິກເຊິ່ງ ດ້ວຍຫຼາຍຮູບແບບ ແລະ ຫຼາຍວິທີການ ເພື່ອເຮັດໃຫ້ພະນັກງານ, ລັດຖະກອນ, ກຳມະກອນ ແລະ ປະຊາຊົນລາວບັນດາເຜົ່າ, ລວມທັງຊາວຕ່າງດ້າວທີ່ດຳລົງຊີວິດຢູ່ ສປປ ລາວ ຕ້ອງມີຄວາມຮັບຮູ້-ເຂົ້າໃຈກ່ຽວກັບ ໜ້າທີ່ ແລະ ພັນທະໃນການປະກອບສ່ວນເຂົ້າໃນວຽກງານປ້ອງກັນ ຕ້ານ, ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂພະຍາດໂຄວິດ-19.

3. ເພີ່ມທະວີວຽກງານເກັບກຳສະພາບແນວຄິດ ແລະ ເກັບກຳທາງສຽງສັງຄົມ ເປັນຕົ້ນ ແມ່ນການເກັບກຳສະພາບແນວຄິດ, ທາງສຽງສັງຄົມ ຂອງພະນັກງານ, ປະຊາຊົນ; ຕິດຕາມຂໍ້ມູນຂ່າວສານຕ່າງໆ ເປັນຕົ້ນ ການໃສ່ຮ້າຍປ້າຍສີ, ບິດເບືອນ, ຂ່າວທີ່ບໍ່ມີມູນຄວາມຈິງ, ການສ້າງຂ່າວປອມ ເພື່ອເຜີຍແຜ່ ແລະ ສິ່ງຕໍ່ຂໍ້ມູນຂ່າວສານທີ່ບໍ່ມີມູນຄວາມຈິງໂດຍຜ່ານສື່ຕ່າງໆ: ສື່ອອນລາຍ, ເຟດບຸກ, ສື່ອິນເຕີເນັດ ແລະ ອື່ນໆ ເພື່ອສ້າງຄວາມປັ່ນປ່ວນ ເຊິ່ງສົ່ງຜົນກະທົບທາງລົບຕໍ່ສັງຄົມ ເພື່ອສະຫຼຸບລາຍງານໃຫ້ຂັ້ນເທິງມີທິດຊີ້ນຳແກ້ໄຂຢ່າງວ່ອງໄວ ແລະ ທັນການ

4. ເພີ່ມທະວີວຽກງານປະສານສົມທົບກັບຄະນະພັກແຕ່ລະຂັ້ນ, ອົງການຈັດຕັ້ງມະຫາຊົນແຕ່ລະຂັ້ນ ໃນການເຄື່ອນໄຫວເຮັດວຽກງານໂຄສະນາເຜີຍແຜ່, ສຶກສາອົບຮົມແນວຄິດ ແລະ ອະທິບາຍຊີ້ແຈງກ່ຽວກັບມາດຕະການໃນການສະກັດກັ້ນ, ປ້ອງກັນ, ຄວາມຄຸມ ແລະ ແກ້ໄຂການລະບາດພະຍາດໂຄວິດ-19 ເປັນຕົ້ນ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ; ຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ເລກທີ 87/ຄລສພ, ຄຳສັ່ງ ເລກທີ 16/ນຈວ, ແຈ້ງການຂອງສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຂັ້ນສູນກາງ ແລະ ທ້ອງຖິ່ນ; ເອກະສານທີ່ທາງຄະນະໂຄສະນາອົບຮົມສູນກາງພັກ.

5. ເພີ່ມທະວີວຽກງານໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ ແລະ ປະຊາຊົນລາວບັນດາເຜົ່າ ກ່ຽວກັບມູນເຊື້ອຮັກຊາດ,ຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ເສີມຂະຫຍາຍມູນເຊື້ອດຸໝັ່ນ, ອົດທົນ, ຂະຫຍັນພຽນ ແລະ ປະດິດສ້າງໃນການອອກແຮງງານ; ຊຸກຍູ້ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໂດຍຕິດພັນກັບຂະບວນການປະຕິບັດຄຳຂວັນ ແລະ ຂໍ້ແຂ່ງຂັນຂອງບັນດາອົງການຈັດຕັ້ງມະຫາຊົນ, ໄປພ້ອມກັບຂະບວນການສ້າງຄອບຄົວສາມັກຄີ, ຄອບຄົວວັດທະນະທຳ..... ຢ່າງເປັນຂະບວນການຟົດຟື້ນ.

6. ເພີ່ມທະວີວຽກງານໂຄສະນາປຸກລະດົມທຸກກຳລັງແຮງສັງລວມຂອງປະຊາຊົນຢູ່ໃນນະຄອນຫຼວງ, ແຂວງ, ນະຄອນ, ເມືອງ, ຮາກຖານບ້ານ, ຊຸມຊົນ ປະກອບສ່ວນເຂົ້າຮ່ວມຂະບວນການຕ້ານ, ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດໂຄວິດ-19 ນັບທັງພະນັກງານ, ທະຫານ, ຕຳຫຼວດ, ລັດຖະກອນ, ກຳມະກອນ, ນັກທຸລະກິດ, ຜູ້ປະກອບການ, ນັກຮຽນຮູ້, ປັນຍາຊົນ, ປະຊາຊົນລາວ ແລະ ຊາວຕ່າງດ້າວທີ່ດຳລົງຊີວິດຢູ່ໃນ ສປປ ລາວ ຈົ່ງພ້ອມກັນຮ່ວມແຮງ, ຮ່ວມໃຈ, ເປັນຈິດໜຶ່ງໃຈດຽວເຂົ້າຮ່ວມໃນ ***ສະໜາມຮົບຕໍ່ສູ້ຕ້ານພະຍາດໂຄວິດ-19*** ຈົ່ງສາມັກຄີກັນ, ພ້ອມກັນຜ່ານຜ່າວິກິດການຂອງພະຍາດໂຄວິດ-19 ໃນຄັ້ງນີ້.

7. ເພີ່ມທະວີການໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ກ່ຽວກັບມາດຕະການໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-***19 "ຖືເອົາການຮັກສາໄລຍະຫ່າງໃນສັງຄົມເປັນປັດໄຈຕັດສິນ; ຖືເອົາການກວດວິເຄາະຫາເຊື້ອພະຍາດໂຄວິດເປັນຂໍກະແຈສຳຄັນພື້ນຖານ; ຖືເອົາການປິ່ນປົວຜູ້ທີ່ຕິດເຊື້ອເປັນໜ້າທີ່ແຖວໜ້າປະຈັນບານ, ຖືເອົາການປົກປັກຮັກສາສຸຂະອະນາໄມໃນສັງຄົມແມ່ນໜ້າທີ່ຕົ້ນຕໍ; ຖືເອົາການປຸກລະດົມຂະບວນການ ໃນການສັກຢາວັກຊີນ ເປັນຍຸດທະສາດສຳຄັນໃນການສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂ***

*ການລະບາດຂອງພະຍາດໂຄວິດ-19. ຖືເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຄວາມປອດໄພໃນທົ່ວສັງຄົມເປັນໜ້າທີ່ຂອງທົ່ວປວງຊົນ"* ດ້ວຍການໂຄສະນາ ປຸກລະດົມ ທົ່ວປວງຊົນເຂົ້າຮ່ວມຂະບວນການສັກວັກຊີນ ເພື່ອສ້າງພູມຕ້ານທານປ້ອງກັນການລະບາດພະຍາດໂຄວິດ-19 ໃຫ້ໄດ້ຕາມແຜນການທີ່ວາງໄວ້; ພ້ອມທັງ ຖືເອົາການສັກວັກຊີນກັນພະຍາດເປັນໜ້າທີ່ ແລະ ພັນທະຂອງພົນລະເມືອງລາວທຸກຄົນ, ທັງເປັນຍຸດທະສາດຂອງພັກ ແລະ ລັດຖະບານ ສປປ ລາວ ໃນການສະກັດກັ້ນ, ປ້ອງກັນ, ຄວບຄຸມ ການແຜ່ລະບາດເຊື້ອພະຍາດໂຄວິດ-19.

ດັ່ງນັ້ນ, ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງຮຽກຮ້ອງມາຍັງຄະນະໂຄສະນາອົບຮົມທຸກຂັ້ນ, ລວມທັງບັນດາກົມໂຄສະນາອົບຮົມໃນບັນດາກະຊວງ-ອົງການຂັ້ນສູນກາງ ຈົ່ງເພີ່ມທະວີການເຄື່ອນໄຫວໂຄສະນາເຜີຍແຜ່, ສຶກສາອົບຮົມໃຫ້ພະນັກງານ, ສະມາຊິກພັກ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ ແລະ ປະຊາຊົນບັນດາເຜົ່າ ໃຫ້ມີຄວາມຮັບຮູ້-ເຂົ້າໃຈຢ່າງກວ້າງຂວາງ ແລະ ທົ່ວເຖິງທຸກເປົ້າໝາຍ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ຄຳພັນ ເຜີຍຍະວົງ